# San Diego Unified School District

Office of the Associate Superintendent
Special Projects Division
Program Monitoring Department

## *ນະໂຍບາຍການພົວພັນພໍ່ແມ່ຂອງໂຄງການທາຍໂທ 1*
## *ແລະ ຂໍ້ແນະນຳ ການປະຕິບັດງານ*

ເພື່ອຮັບປະກັນໃຫ້ເຮັດວຽກປະສານງານກັນລະຫວ່າງໂຮງຮຽນໂທ 1, ພໍ່ແມ່ນັກຮຽນ, ແລະ ຊຸມຊົນ, ສະພາສຶກສາ, ໂດຍຕລອດການເຮັດວຽກຂອງຫ້ອງການປົກຄອງ, ແມ່ນໄດ້ຕັດສິນໃຈເພື່ອ:

**1. ເຮັດວຽກຮ່ວມກັບພໍ່ແມ່/ຜູ້ປົກຄອງ ເພື່ອຮ່ວມປັບປຸງ ແຜນການເຮັດວຽກຂອງ ໂຄງທາຍໂທ 1 ສູນກາງສຶກສາ, ແລະ ການ ການດຳເນີນງານ ດ້ານການທົບທວນ ແລະ ການປັບປຸງໂຮງຮຽນ.**

ສູນກາງສຶກສາຈະເປີດໂອກາດໃຫ້ພໍ່ແມ່ເຂົ້າພົວພັນໂດຍ:

*a. ເຂົ້າປະກອບສ່ວນ ໃນການປັບປຸງ ແລະ ທົບທວນ ແຜນການສຶກສາຂອງອົງການສຶກສາທ້ອງຖິ່ນ (LEA).*

*b. ເຂົ້າປະກອບສ່ວນ ໃນການປະເມີນຜົນ ແຜນການສຶກສາທ້ອງຖິ່ນ (LEA), ປະສານງານກັບສະພາທີ່ປຶກສາສູນກາງສຶກສາ (DAC) ສຳຫລັບໂຄງການທົບແທນການສຶກສາ.*

*c. ແລກປ່ຽນຂ່າວຕ່າງໆໂດຍຜ່ານການລາຍງານຂອງສະພາສຶກສາທ້ອງຖິ່ນ (BOE), ຜ່ານຕາໜ່າງຂ່າວສູນກາງສຶກສາ, ແລະ ຜ່ານກຸ່ມລາຍງານຂອງສະພາສຶກສາທ້ອງຖິ່ນ (BOE) ໃນກອງປະຊຸມຂອງ DAC, ໃນລາຍງານຄວາມກ້າວໜ້າຂອງແຕລະໂຮງຮຽນໃນການປະຊຸມວັດແທກຄວາມຮັບຜິດຊອບທຸກໆຢ່າງ. (ຄວາມກ້າວໜ້າພຽງພໍປະຈຳປີ, ຕົວເລກສະແດງລະດັບການຮຽນ (Adequate Yearly Progress, Academic Performance Index).*

**2. ໃຫ້ການປະສານງານ, ຊ່ວຍເຫລືອດ້ານແທກນິກ ແລະ ສິ່ງຈຳເປັນອື່ນໆ ເພື່ອຊ່ວຍຜູ້ເຂົ້າປະກອບສ່ວນໃນໂຮງຮຽນ ວາງແຜນ ການວາງແຜນ ແລະ ປະຕິບັດງານກິຈກັມພົວພັນພໍ່ແມ່ໃຫ້ຖືກຕ້ອງເຫມາະສົມ ເພື່ອປັບປຸງຄວາມສຳເຣັດດ້ານການຮຽນຂອງນັກຮຽນ ແລະ ລະດັບການຮຽນຂອງໂຮງຮຽນ.**

ສູນກາງສຶກສາຈະຊ່ອຍໂດຍ:

*a. ຈັດສູນກາງຝຶກອົບຮົມ ໂດຍຜ່ານສູນກາງພໍ່ແມ່ນັກຮຽນ Harold J. Ballard Parent Center.*

*b. ຈັດສູນກາງຝຶກອົບຮົມ ສຳຫລັບສະພາປະຈຳໂຮງຮຽນ (SSC) ແລະ ສະພາທີ່ປຶກສາຜູ້ຮຽນອັງກິດ (ELAC) ໂດຍຜ່ານຫ້ອງການ Program Monitoring Department.*

*c. ໃຫ້ການຝຶກອົບຮົມ ຜູ້ປະສານງານອາສາສມັກພໍ່ແມ່ ໂດຍຜ່ານຫ້ອງການ Partnerships Office.*

*d. ຈັດໃຫ້ມີການຝຶກອົບຮົມພະນັກງານ ແລະ/ຫລື ໃຫ້ອຸປະກອນ ສຳຫລັບໃຊ້ປັບປຸງການເຂົ້າຮ່ວມກິຈກັມຂອງພໍ່ແມ່ໃຫ້ມີການຖືກຕ້ອງເຫມາະສົມດີ ເພື່ອປັບປຸງຄວາມກ້າວໜ້າການຮຽນຂອງພວກນັກຮຽນ.*

**3. ສ້າງຄວາມສາມາດຂອງໂຮງຮຽນ, ພະນັກງານ, ແລະ ຂອງພໍ່ແມ່/ຜູ້ປົກຄອງ ໃຫ້ແຂງແກ່ນ, ຖືກຕ້ອງເຫມາະສົມ ແລະ ໃຫ້ພໍ່ແມ່ໄດ້ເຂົ້າຮ່ວມໃນການສຶກສາຂອງເດັກຂອງເຂົາເຈົ້າຕິດຕໍ່ກັນໄປ ເພື່ອປັບປຸງຄວາມສຳເຣັດດ້ານການຮຽນຂອງພວກນັກຮຽນ.**

ສູນກາງສຶກສາຈະຊ່ອຍໂດຍ:

*a. ຈັດໃຫ້ມີການຝຶກອົບຮົມເປັນຜູ້ພາ ແກ່ພໍ່ແມ່ ທີ່ສູນກາງພໍ່ແມ່ນັກຮຽນ Harold J. Ballard Parent Center.*

*b. ຈັດໃຫ້ມີການຝຶກອົບຮົມ ແກ່ສະມາຊຸກສະພາປະຈຳໂຮງຮຽນ (SSC) ໂດຍຜ່ານຫ້ອງການ Program Monitoring Department.*

*c. ຈັດໃຫ້ມີຫ້ອງຮຽນ Parent University ສຳຫລັບພໍ່ແມ່ ທຸກໆຄົນ ທີ່ Harold J. Ballard Parent Center.*

*d. ຈັດໃຫ້ມີການຝຶກອົບຮົມສຳຫລັບສະມາຊິກສະພາທີ່ປຶກສາຂັ້ນສູນກາງ (DAC)ກ່ຽວກັບທຸກໆເລື້ອງຂອງໂຄງການທາຍໂທ 1 ໃນກອງປະຊຸມປະຈຳເດືອນ.*

**4. ເຮັດໃຫ້ວິທີການພົວພັນພໍ່ແມ່ຂອງໂຄງການທາຍໂທ 1 ເປັນກ້ອນເປັນໜ່ວຍແລະປະສົມປະສານກັນກັບ ວິທີການພົວພັນພໍ່ແມ່ ໃນໂຄງການອື່ນໆ.**

ສູນກາງສຶກສາຈະໃຫ້ການປະສານງານ ດ້ານການບໍຣິການຊ່ວຍເຫລືອລະຫວ່າງ:

*a. ສູນກາງຄວາມຮູ້ຂອງພໍ່ແມ່ຣັຖຄາລິຟໍເນັຍ (CPRC) ແລະ ສູນກາງພໍ່ແມ່ Harold J. Ballard Parent Center.*

*b. ພໍ່ແມ່ສູນກາງສຶກສາແຂວນດິເອໂກ, ຊຸມຊົນທົ່ວໄປ, ແລະ ຜູ້ເຮັດວຽກກັບນັກຮຽນ ແລະ ສູນກາງພໍ່ແມ່ນັກຮຽນ Harold J. Ballard Parent Center.*

*c. ໂຄງການດູແລເດັກຂອງສູນກາງສຶກສາແຂວນດິເອໂກ ແລະ ສູນກາງພໍ່ແມ່ນັກຮຽນ Harold J. Ballard Parent Center.*

**5. ທຳການປະເມີນຜົນເນື້ອໃນການຮຽນ ແລະ ນະໂຍບາຍການພົວພັນພໍ່ແມ່ນັກຮຽນປະຈຳເປັນຮ່ວມກັບພໍ່ແມ່/ຜູ້ປົກຄອງນັກຮຽນ ໃຫ້ຖືກຕ້ອງເຫມາະສົມເພື່ອປັບປຸງຄຸນນະພາບການຮຽນຢູ່ໃນໂຮງຮຽນທີ່ມີໂຄງການທາຍໂທ 1, ໂດຍມີການ:**

- **ແຈ້ງບັນຫາສຳຄັນທີ່ພໍ່ແມ່/ຜູ້ປົກຄອງບໍ່ເຂົ້າຮ່ວມພົວພັນໃນກິຈກັມຕ່າງໆ, ໂດຍສະເພາະພໍ່ແມ່/ຜູ້ປົກຄອງທີ່ມີລາຍໄດ້ຕໍ່າ, ທີ່ເປັນຄົນພິການ, ທີ່ຮູ້ພາສາອັງກິດບໍ່ຄ່ອງແຄ້ວ, ທີ່ຮູ້ໜັງສືຈຳກັດ, ແລະ ທີ່ມາຈາກກຸ່ມເຜົ່າຊົນສ່ວນນ້ອຍ.**
- **ໃຊ້ຜົນຂອງການປະເມີນ ເພື່ອວາງແຜນຍຸທະວິທີ ເຮັດໃຫ້ການພົວພັນຂອງພໍ່ແມ່ຖືກຕ້ອງເຫມາະສົມເພີ້ມຂຶ້ນ.**

ສູນກາງສຶກສາຈະຊ່ອຍໂດຍ:

*a. ບໍຣິການແປພາສາ, ຕາມຄວາມເຫມາະສົມ, ໃນການປະຊຸມພໍ່ແມ່/ຊຸມຊົນ.*

*b. ເຂົ້າຮ່ວມການປະເມີນຜົນປະຈຳປີ ກ່ຽວກັບນະໂຍບາຍພົວພັນພໍ່ແມ່ນັກຮຽນຂັ້ນສູນກາງສຶກສາ; ປະສານງານ ແລະ ລາຍງານການປະເມີນຜົນທຸກໆຢ່າງຂອງການປະເມີນຜົນຄະນະທີ່ປຶກສາສູນກາງສຶກສາ ໂດຍສະພາທີ່ປຶກສາສູນກາງສຶກສາ (DAC) ສຳຫລັບໂຄງການທົບແທນການສຶກສາ..*

*c. ເຂົ້າຮ່ວມການທົບທວນແກ້ໄຂນະໂຍບາຍການພົວພັນພໍ່ແມ່ນັກຂັ້ນສູນກາງສຶກສາ, ຕາມຄວາມຕ້ອງການ , ໂດຍອີງຕາມຜົນຂອງການປະເມີນ.*

*d. ໃຫ້ສະພາທີ່ປຶກສາຂັ້ນສູນກາງ (DAC) ທຳການທົບທວນ ໂຄງການຕ່າງໆ ໃນໃບຄຳຮ້ອງ ແລະ ຄຳຄິດເຫັນຕ່າງໆ ເພື່ອທຳການພິຈາຣະນາເງິນງົບປະມານ.*

**6. ຈັດໃຫ້ພໍ່ແມ່/ຜູ້ປົກຄອງນັກຮຽນເຂົ້າຮ່ວມພົວພັນໃນວິທີການ/ກິຈກັມຕ່າງໆຂອງໂຮງຮຽນຢູ່ໃນໂຄງການທາຍໂທ 1.**

ສູນກາງສຶກສາຈະຮັບປະກັນໃຫ້:

*a. ມີການຕິດຕໍ່ພົວພັນອັນດີເປັນປະຈຳ ສອງ–ຝ່າຍ ໃນສອງຂັ້ນ ຂັ້ນໂຮງຮຽນ ແລະ ສູນກາງສຶກສາ, ໂດຍອີງຕາມໂຄງຮ່າງການດຳເນີນງານຂອງສູນກາງສຶກສາ.*

*b. ທຸກໆໂຮງຮຽນຢູ່ໃນໂຄງການທາຍໂທ 1 ໄດ້ຮັບວຽກງານ ດ້ານກິຈກັມການພົວພັນພໍ່ແມ່ນັກຮຽນ.*

*c. ມີການປະຊຸມໃນເວລາທີ່ເຫມາະສົມ ເພື່ອໃຫ້ພໍ່ແມ່ນັກຮຽນໄດ້ເຂົ້າຮ່ວມໂດຍສະດວກ.*

*d. ພໍ່ແມ່ໄດ້ຮັບແຈ້ງ ເມື່ອເວລາໂຮງຮຽນຖືກເຂົ້າຢູ່ໃນໂຄງການປັບປຸງ, ແລະ ແຈ້ງໃຫ້ພໍ່ແມ່ຊາບກ່ຽວກັບການບໍຣິການ/ທາງເລືອກທີ່ນັກຮຽນໄດ້ຮັບ ໃນໂຄງການເລືອກປັບປຸງ ແລະ/ຫລື ໂຄງການ ບໍຣິການການສຶກສາເພີ້ມ.*